


| ຄຳທຳນວາຍ | ສຳເລັດ | ຄຳທຳນວາຍ | ສຳເລັດ |
|---|---|---|---|
| ປະຖົມມະການ 3:15 | ໂຢຮັນ 19:16 | ເພງສັນລະເສີນ 69:21 | ມັດທາຍ 27:34 |
| ອົບພະຍົບ 12:46 | ໂຢຮັນ 19:36 | ເພງສັນລະເສີນ 109:25 | ມັດທາຍ 27:39 |
| ເພງສັນລະເສີນ 2:2 | ມາລະໂກ 15:1 | ເອຊາຢາ 50:6 | ມັດທາຍ 26:67 |
| ເພງສັນລະເສີນ 22:1 | ມັດທາຍ 27:46 | ເອຊາຢາ 53:3 | ໂຢຮັນ 1:11 |
| ເພງສັນລະເສີນ 22:6 | ມັດທາຍ 27:39-44 | ເອຊາຢາ 53:5-10 | ໂຣມ 5:6-8 |
| ເພງສັນລະເສີນ 22:7-8 | ມັດທາຍ 27:39-44 | ເອຊາຢາ 53:7 | ມັດທາຍ 27:13-14 |
| ເພງສັນລະເສີນ 22:16 | ໂຢຮັນ 19:18 | ເອຊາຢາ 53:7 | ມັດທາຍ 26:62-63 |
| ເພງສັນລະເສີນ 22:17 | ມັດທາຍ 27:36 | ເອຊາຢາ 53:8 | ມາລະໂກ 15:1-25 |
| ເພງສັນລະເສີນ 22:18 | ມັດທາຍ 27:35 | ເອຊາຢາ 53:9 | ມັດທາຍ 27:57-60 |
| ເພງສັນລະເສີນ 31:5 | ລູກາ 23:46 | ເອຊາຢາ 53:12 | ມາລະໂກ 15:27-28 |
| ເພງສັນລະເສີນ 35:11 | ມາລະໂກ 14:56 | ດານຽນ 9:26 | ມັດທາຍ 26:24 |
| ເພງສັນລະເສີນ 38:11 | ລູກາ 23:49 | ອາໂມດ 8:9 | ມັດທາຍ 27:45 |
| ເພງສັນລະເສີນ 41:9 | ໂຢຮັນ 13:18 | ເສຄາລິຢາ 11:13 | ມັດທາຍ 27:9 |
| ເພງສັນລະເສີນ 34:20 | ໂຢຮັນ 19:32-36 | ເສຄາລິຢາ 12:10 | ໂຢຮັນ 19:34 |
| ເພງສັນລະເສີນ 69:19 | ມັດທາຍ 27:28-29 | ເສຄາລິຢາ 13:7 | ມາລະໂກ 14:27, 50 |




ແຕ່ຖ້າພຣະເຢຊູເປັນ<u>ພຣະເຈົ້າ</u>ຜູ້ຮອບຮູ້ ແລະກ່າວແຕ່ ຄວາມຈິງຕາມຂໍ້ອ້າງຂອງພຣະອົງ....

ການຕັດສິນໃຈຂອງຕົວທ່ານເອງຈະກຳນົດອານາຄົດຕະຫຼອດໄປຂອງ<u>ທ່ານ</u>

*“ຂໍໃຫ້ທ່ານເລືອກເອົາລະຫວ່າງຊີວິດກັບຄວາມຕາຍ ລະຫວ່າງພຣະພອນກັບຄຳສາບແຊ່ງ”*

ພະບັນຍັດສອງ 30:19

## ທ່ານຈະຕັດສິນໃຈຢ່າງໃດກ່ຽວກັບພຣະເຢຊູຄຣິດ?

(ພຣະຜູ້ເນລະມິດສ້າງຈັກກະວານ)

ທ່ານຈະປະຕິເສດຫຼືຍອມຮັບ?

ນີ້ຄືການຕັດສິນໃຈທີ່ສຳຄັນທີ່ສຸດໃນຊີວິດຂອງທ່ານ

*ໃນເວລາທີ່ທ່ານຢູ່ຕໍ່ໜ້າພຣະເຢຊູ ພຣະອົງຈະເປັນພຣະຜູ້ຊ່ວຍທ່ານ ຫຼື ເປັນຜູ້ຕັດສິນລົງໂທດທ່ານ?*

<u>ພຣະຄຳພີບອກວ່າມີທາງໄປສູ່ຟ້າສະຫວັນພຽງທາງດຽວ!</u>

ພຣະເຢຊູກ່າວວ່າ: *“ເຮົານີ້ແຫຼະເປັນທາງນັ້ນ, ເປັນຄວາມຈິງ, ແລະເປັນຊີວິດ ບໍ່ມີຜູ້ໃດມາເຖິງພຣະບິດາໄດ້ນອກຈາກມາທາງເຮົາ”* ໂຢຮັນ 14:6 ຜູ້ອື່ນຍົກໂທດບາບຂອງທ່ານບໍ່ໄດ້. ຈົ່ງເຊື່ອວາງໃຈໃນພຣະເຢຊູວັນນີ້: <u>1</u> ຍອມຮັບວ່າທ່ານເປັນຄົນບາບ ໂຣມ 3:10. <u>2</u> ຈົ່ງເຕັມໃຈຫັນຫລັງໃຫ້ຄວາມບາບ(ຄືກັບໃຈເສຍໃໝ່) ກິຈະການ 17:30. <u>3</u> ເຊື່ອວ່າພຣະເຢຊູຄຣິດໄດ້ຕາຍເພື່ອທ່ານ ຖືກຝັງແລະຟື້ນຄືນມາຈາກຄວາມຕາຍ. ໂຣມ 10:9-10. <u>4</u> ອະທິຖານເຊີນພຣະເຢຊູເຂົ້າມາໃນໃຈຂອງທ່ານເພື່ອໃຫ້ພຣະອົງເປັນພຣະຜູ້ຊ່ວຍໃຫ້ພົ້ນແລະເປັນພຣະເຈົ້າຂອງທ່ານ ໂຣມ 10:13.

ເຊີນອະທິຖານດັ່ງຕໍ່ໄປນີ້: “ຂ້າແດ່ພຣະເຈົ້າ ຂ້າພະອົງເປັນຄົນມີບາບແລະຕ້ອງການ ການຍົກໂທດບາບ ຂ້າພະອົງເຊື່ອວ່າພຣະເຢຊູຄຣິດໄດ້ຫລັ່ງພຣະໂລຫິດແລະຕາຍເທິງໄມ້ກາງແຂນເພື່ອໄຖ່ບາບຂອງຂ້າພະອົງ ຂ້າພະອົງຂໍກັບໃຈເສຍໃໝ່ແລະເຊີນພຣະອົງເຂົ້າມາເປັນພຣະຜູ້ຊ່ວຍໃຫ້ພົ້ນແລະເປັນພຣະເຈົ້າຂອງຂ້າພະອົງ”.

ຖ້າທ່ານຮັບພຣະເຢຊູແລ້ວ ທ່ານກໍໄດ້ເລີ້ມຕົ້ນຊີວິດໃໝ່ກັບພຣະເຢຊູຄຣິດແລ້ວ.ໃນຊີວິດໃໝ່ນັ້ນທ່ານຄວນປະຕິບັດດັ່ງຕໍ່ໄປນີ້: <u>1</u> ອ່ານພຣະຄຳພີທຸກໆມື້ເພື່ອຈະໄດ້ຮູ້ພຣະເຢຊູຫຼາຍຂຶ້ນ. <u>2</u> ອະທິຖານສົນທະນາກັບພຣະເຈົ້າທຸກວັນ. <u>3</u> ຊອກຫາໂບດ (ວິຫານ) ຄຣິສຕະຈັກເພື່ອຮັບບັບຕິສະມາແລະຮ່ວມນະມັດສະການພຣະເຈົ້າແລະສຶກສາພຣະຄຳພີຮ່ວມກັນ. <u>4</u> ເລົ່າເລື່ອງການໄຖ່ບາບຂອງພຣະເຢຊູໃຫ້ຄົນອື່ນຟັງ. ຂໍພຣະເຈົ້າອວຍພອນທ່ານ!